ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ

ເຈົ້າໜ້າທີ່ທະບຽນວິສາຫະກິດ

ເລກທີ 387 /ຈທວ.ກທຄວ

ນະຄອນຫຼວງວຽງຈັນ, ວັນທີ 29 ພະຈິກ 2018

ເຖິງ: ບັນດາພາກສ່ວນຕ່າງໆ (ທັງພາກລັດ ແລະ ເອກະຊົນ) ໃນຂອບເຂດທົ່ວປະເທດ

ເລື່ອງ: ແຈ້ງການລົບລ້າງໃບທະບຽນວິສາຫະກິດ ກອງທຶນປົກປ້ອງຜູ້ຝາກເງິນ

- ອີງຕາມ ກົດໝາຍວ່າດ້ວຍ ວິສາຫະກິດ ສະບັບເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມ ໜັງສື ເລກທີ 3009/ກງ, ລົງວັນທີ 5 ພະຈິກ 2018.

ບົນພື້ນຖານ ໜັງສືສະເໜີ ເລກທີ 3009/ກງ, ລົງວັນທີ 5 ພະຈິກ 2018 ຂອງ ກະຊວງ ການເງິນ ກ່ຽວກັບການຍຸບເລີກ ແລະ ລົບລ້າງໃບທະບຽນວິສາຫະກິດ ຂອງກອງທຶນປົກປ້ອງຜູ້ຝາກເງິນ; ເຈົ້າໜ້າທີ່ທະບຽນວິສາຫະກິດ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງ ອຸດສາຫະກຳ ແລະ ການຄ້າ ແຈ້ງມາຍັງບັນດາພາກສ່ວນຕ່າງໆ (ທັງພາກລັດ ແລະ ເອກະຊົນ) ໃນຂອບເຂດທົ່ວປະເທດ ໄດ້ຮັບຊາບວ່າ:

1. ໃບທະບຽນວິສາຫະກິດ ເລກທີ 431/ຈທວ, ລົງວັນທີ 25 ມິຖຸນາ 2015. ເລກລະຫັດໃບທະບຽນວິສາຫະກິດ 01-00008151. ຊື່ວິສາຫະກິດ: ກອງທຶນປົກປ້ອງຜູ້ຝາກເງິນ (ອອກໃຫ້ໂດຍ ເຈົ້າໜ້າທີ່ທະບຽນວິສາຫະກິດ, ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ) ໄດ້ຖືກລົບລ້າງ ດ້ວຍເຫດຜົນຕາມໜັງສື ເລກທີ 3009/ກງ, ລົງວັນທີ 5 ພະຈິກ 2018 (ໄດ້ຄັດຕິດມາພ້ອມນີ້) ແລະ ມີຜົນນັບແຕ່ວັນທີ 29 ພະຈິກ 2018 ເປັນຕົ້ນໄປ;
2. ການລົບລ້າງໃບທະບຽນວິສາຫະກິດ ມີຜົນດັ່ງນີ້:
   - 2.1 ບໍ່ສາມາເຄື່ອນໄຫວທຸລະກິດໄດ້, ໃນກໍລະນີລະເມີດຈະຖືກປະຕິບັດມາດຕະການຢ່າງເຂັ້ມງວດ ຕາມມາດຕາ 212 ຂອງ ກົດໝາຍວ່າດ້ວຍວິສາຫະກິດ;
   - 2.2 ຕ້ອງນຳເອົາໃບທະບຽນວິສາຫະກິດ (ສະບັບຕົ້ນ) ມາໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດທີ່ກ່ຽວຂ້ອງເກັບຮັກສາໄວ້. ກໍລະນີບຸກຄົນ ຫຼື ນິຕິບຸກຄົນໃດ ຫາກນຳໃບທະບຽນວິສາຫະກິດຂອງວິສາຫະກິດດັ່ງກ່າວໄປນຳໃຊ້ ນອກຈາກຈະຖືກປະຕິບັດມາດຕະການ ຕາມຂໍ້ 2.1 ເທິງນີ້ແລ້ວ ຍັງຕ້ອງຮັບຜິດຊອບທັງໝົດຕໍ່ໜ້າກົດໝາຍຈາກຜົນເສຍຫາຍທີ່ເກີດຂຶ້ນ;
   - 2.3 ກອງທຶນປົກປ້ອງຜູ້ຝາກເງິນ ສິ້ນສຸດສະພາບການເປັນນິຕິບຸກຄົນ ຕາມທີ່ໄດ້ບົ່ງໄວ້ໃນກົດໝາຍວິສາຫະກິດ ແລະ ບໍ່ມີຕົວຕົນອີກຕໍ່ໄປ.

ແຈ້ງມາຍັງທຸກພາກສ່ວນເພື່ອຊາບ

ເຈົ້າໜ້າທີ່ທະບຽນວິສາຫະກິດ

ຮຸມແພງ ຄຳພາສິດ

Houmpheng KHAMPHASITH

**ບ່ອນສົ່ງ**

| | |
|---|---|
| - ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ | 1 ສະບັບ; |
| - ຫ້ອງການ ກະຊວງການເງິນ | 1 ສະບັບ; |
| - ກົມສ່ວຍສາອາກອນ | 1 ສະບັບ; |
| - ກອງທຶນປົກປ້ອງຜູ້ຝາກເງິນ | 1 ສະບັບ; |
| - ສຳເນົາ | 1 ສະບັບ. |

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ກະຊວງອຸດສາຫະກຳ ແລະ ການຄ້າ
ເລກທີ 2519
ວັນທີ 07/11/18

ເລກທີ 3009 /ຫກງ
ນະຄອນຫຼວງວຽງຈັນ, ວັນທີ 05 ພະຈິກ 2018

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ
ເລກທີ 2994
ວັນທີ 09.11.18

# ໜັງສືສະເໜີ

ຮຽນ : ທ່ານຫົວໜ້າຫ້ອງການ ກະຊວງອຸດສາຫະກຳ ແລະ ການຄ້າ ທີ່ນັບຖື.

ເລື່ອງ : ການຍຸບເລີກ ແລະ ລຶບລ້າງໃບທະບຽນວິສາຫະກິດຂອງກອງທຶນປົກປ້ອງຜູ້ຝາກເງິນ.

- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 329/ລບ, ລົງວັນທີ 25 ຕຸລາ 2017 ວ່າດ້ວຍການປົກປ້ອງຜູ້ຝາກເງິນ;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນ ສະບັບເລກທີ 2929/ກງ, ລົງວັນທີ 31 ສິງຫາ 2017 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການກະຊວງການເງິນ;
- ອີງຕາມ ຂໍ້ຕົກລົງຂອງຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ ສະບັບເລກທີ 2655/ກງ, ລົງວັນທີ 20 ສິງຫາ 2018 ວ່າດ້ວຍການຍຸບເລີກກອງທຶນປົກປ້ອງຜູ້ຝາກເງິນ;
- ອີງຕາມ ໜັງສືສະເໜີຂອງກອງທຶນປົກປ້ອງຜູ້ຝາກເງິນ ສະບັບເລກທີ 112/ກທປ, ລົງວັນທີ 26 ກັນຍາ 2018;
- ອີງຕາມ ໜັງສືສະເໜີຂອງກົມຄຸ້ມຄອງ, ພັດທະນາລັດວິສາຫະກິດ ແລະ ການປະກັນໄພ ສະບັບເລກທີ 1221/ຄລປ, ລົງວັນທີ 01 ພະຈິກ 2018.

ຫ້ອງການກະຊວງການເງິນ ຂໍຖືເປັນກຽດຮຽນສະເໜີມາຍັງທ່ານຊາບວ່າ : ກອງທຶນປົກປ້ອງຜູ້ຝາກເງິນ ໄດ້ຖືກຍຸບເລີກຕາມຂໍ້ຕົກລົງຂອງຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ ແລະ ໄດ້ປ່ຽນມາເປັນສຳນັກງານປົກປ້ອງເງິນຝາກ ຊຶ່ງແມ່ນການຈັດຕັ້ງການເງິນຂອງລັດ ມີຖານະທຽບເທົ່າກົມ ຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 329/ລບ, ລົງວັນທີ 25 ຕຸລາ 2017. ປະຈຸບັນ ໃບທະບຽນວິສາຫະກິດ ທີ່ຢູ່ພາຍໃຕ້ການຄຸ້ມຄອງ ແລະ ຕິດຕາມຂອງກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ຍັງບໍ່ທັນໄດ້ຖືກລຶບລ້າງເທື່ອ. ສະນັ້ນ, ຫ້ອງການກະຊວງການເງິນ ຈຶ່ງຮຽນສະເໜີມາຍັງທ່ານ ເພື່ອປະສານສົມທົບກົມກ່ຽວຂ້ອງ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ດຳເນີນການລຶບລ້າງໃບທະບຽນວິສາຫະກິດ ຂອງກອງທຶນປົກປ້ອງຜູ້ຝາກເງິນ ສະບັບເລກທີ 481/ຈທວ, ລົງວັນທີ 25 ມິຖຸນາ 2015 ຕາມຂັ້ນຕອນ ແລະ ລະບຽບກົດໝາຍດ້ວຍ.

ດັ່ງນັ້ນ, ຈຶ່ງຂໍຖືເປັນກຽດຮຽນສະເໜີມາຍັງທ່ານ ເພື່ອຊາບ ແລະ ພິຈາລະນາຕາມທາງຄວນດ້ວຍ.

ຫົວໜ້າຫ້ອງການກະຊວງການເງິນ

ສົມບູນ ອິນທະປັນຍາ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----------------------------

# ໃບທະບຽນວິສາຫະກິດ

ຕົ້ນສະບັບ

ເລກທີ 4 31 /ຈທວ



- ອີງຕາມກົດໝາຍວ່າດ້ວຍວິສາຫະກິດເລກທີ່46/ສພຊ,ລົງວັນທີ 26/12/2013.
- ອີງຕາມໃບຄຳຮ້ອງແຈ້ງຂື້ນທະບຽນວິສາຫະກິດ,ລົງວັນທີ 10/06/2015

ເຈົ້າໜ້າທີ່ທະບຽນວິສາຫະກິດ, ( ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງ ອຸດສາຫະກຳ ແລະ ການຄ້າ) ໄດ້ຂື້ນທະບຽນວິສາຫະກິດໃຫ້ແກ່: ນາງ ແສງດາວວີ ວົງຄຳຊາວ

ສັນຊາດ: ລາວ ຊຶ່ງເປັນ ຜູ້ອຳນວຍການ ຂອງວິສາຫະກິດ:

- ຊື່ວິສາຫະກິດ: ກອງທຶນປົກປ້ອງຜູ້ຝາກເງິນ
- ຊື່ວິສາຫະກິດ ເປັນພາສາສາກົນ: DEPOSITERS PROTECTION FUND
- ຮູບການ ຫຼື ຮູບແບບວິສາຫະກິດ: ບໍລິສັດລັດ
- ທຶນຈົດທະບຽນ: 30,100,000,000 ກີບ
- ທີ່ຕັ້ງສຳນັກງານ:ຖະໜົນ ກຳແພງເມືອງ ,ບ້ານ ດອນກອຍ
- ເມືອງ ສີສັດຕະນາກ ແຂວງ ນະຄອນຫຼວງວຽງຈັນ
- ປະເພດທຸລະກິດ (ໄດ້ບົ່ງໄວ້ດ້ານຫຼັງ).

| | | | |
|---|---|---|---|
| ເລກລະຫັດວິສາຫະກິດ | 01-00008151 | 479 6 | (K/1) |

ເລກປະຈຳຕົວຜູ້ເສຍອາກອນ ☐☐☐☐☐☐☐☐☐-☐-☐☐

ໝາຍເຫດ

ປ່ຽນແປງທະບຽນເລກທີ 0322/ຈທວ, 29/02/2010 ເນື່ອງຈາກປ່ຽນຜູ້ອຳນວຍການ, ເພີ່ມທຶນຈົດທະບຽນ, ປ່ຽນແປງມູນຄ່າຮຸ້ນ ແລະ ຈຳນວນຮຸ້ນ.

ທີ່ ນະຄອນຫຼວງວຽງຈັນ ,ວັນທີ 25 JUN 2015

ເຈົ້າໜ້າທີ່ທະບຽນວິສາຫະກິດ

ຫຸມແພງ ຄຳພາສິດ

Houmpheng KHAMPHASITH

# ປະເພດທຸລະກິດ

| ຂະແໜງ | ຈຳພວກ | ລາຍການດຳເນີນທຸລະກິດ |
|---|---|---|
| K | | **ການເຄື່ອນໄຫວ ດ້ານການເງິນ ແລະ ການປະກັນໄພ** |
| 66 | 6619 | ການເຄື່ອນໄຫວຊ່ວຍຍູ້ອື່ນໆ ໃຫ້ການເຄື່ອນໄຫວບໍລິການດ້ານການເງິນ. ດຳເນີນທຸລະກິດດ້ານ: ຄ້ຳປະກັນ ເງິນຝາກຂອງຜູ້ຝາກເງິນໄວ້ກັບທະນາຄານທຸລະກິດໂດຍບໍ່ຫວັງຜົນກຳໄລ. |